# ທ່ານຕ້ອງການຄວາມຊ່ວຍເຫຼືອດ້ານການເງິນຍ້ອນ COVID-19 ບໍ?



ທ່ານອາດຈະສາມາດໄດ້ຮັບ**ເງິນເບັ້ຍລ້ຽງຊ່ວຍເຫຼືອຍ້ອນໄພພິບັດຈາກ COVID-19** ເນື່ອງຈາກຖືກຈຳກັດການເຄື່ອນໄຫວ ຫຼື ລອັກດາວ.

ທ່ານອາດຈະສາມາດໄດ້ຮັບ **ເງິນເບັ້ຍລ້ຽງໄພພິບັດລາພັກຍ້ອນການລະບາດ** ຖ້າທ່ານບໍ່ສາມາດເຮັດວຽກແລະຖ້າວ່າທ່ານຕົກໃສ່ໜຶ່ງໃນເງື່ອນໄຂຂ້າງລຸ່ມນີ້:

- ເຈົ້າໜ້າທີ່ທາງການແພດຂອງລັດຖະບານປະຈຳລັດຫຼືເຂດປົກຄອງໄດ້ບອກໃຫ້ທ່ານແຍກປ່ຽວຫຼືກັກໂຕເພາະວ່າທ່ານໄດ້ສຳຜັດໃກ້ຊິດກັບກໍລະນີທີ່ຖືກຢັ້ງຢືນ ຫຼື ທ່ານມີເຊື້ອ COVID-19
- ທ່ານກຳລັງດູແລໃຜຜູ້ໜຶ່ງທີ່ມີເຊື້ອ COVID-19.

ນອກນີ້ ທ່ານກໍອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອດ້ານການເງິນເປັນແບບລະຍະຍາວ. ໃຫ້ໃຊ້ຕົວຄົ້ນພົບຊອກເບິ່ງເງິນເບັ້ຍລ້ຽງແລະບໍລິການ ເພື່ອສຶກສາເບິ່ງວ່າທ່ານຈະສາມາດໄດ້ຮັບເງິນແບບໃດແດ່: **servicesaustralia.gov.au/paymentfinder**

ໃຫ້ເຂົ້າໄປ ທີ່ **servicesaustralia.gov.au/covid19** ຫຼືສະແກນລະຫັດ QR ນີ້ເພື່ອກວດເບິ່ງວ່າທ່ານສາ ມາດໄດ້ຮັບເງິນເບັ້ຍລ້ຽງຢ່າງໃດຢ່າງໜຶ່ງຫຼືບໍ່.

15433LA.2107 - Lao